Texas Health Resources

# ສະຫຼຸບພາສາທີ່ເຂົ້າໃຈໄດ້ງ່າຍ ຂອງນະໂຍບາຍຄວາມຊ່ວຍເຫຼືອດ້ານການເງິນ
# Plain Language Summary of Financial Assistance Policy

## ກ່ຽວກັບການຮັບຄວາມຊ່ວຍເຫຼືອກັບໃບບິນຂອງທ່ານ

ນີ້ແມ່ນສໍາລັບຜູ້ທີ່ຮັບການບໍລິການໂຮງໝໍຈາກໂຮງໝໍໃນເຄືອ Texas Health Resources (THR).
ນະໂຍບາຍຄວາມຊ່ວຍເຫຼືອດ້ານການເງິນ ແລະ ສະຫຼຸບພາສາທີ່ເຂົ້າໃຈໄດ້ງ່າຍສໍາລັບການໄດ້ຮັບຄວາມຊ່ວຍເຫຼືອກັບໃບບິນຂອງທ່ານ ມີຢູ່ໃນພາສາອັງກິດແລະ ພາສາສະເປນ ແລະພາສາອື່ນໆຕາມທີ່ຮ້ອງຂໍ.
ການຊ່ວຍເຫຼືອດ້ານການເງິນບໍ່ສາມາດນໍາໃຊ້ໄດ້ກັບໃບບິນຈາກໝໍ, ຫ້ອງແລບນອກ ຫຼື ຜູ້ໃຫ້ບໍລິການອື່ນໆ.

## ຂ້າພະເຈົ້າຈະມີສິດໄດ້ຮັບຄວາມຊ່ວຍເຫຼືອດ້ານການເງິນໄດ້ແນວໃດ?

ທ່ານສາມາດຂໍຄວາມຊ່ວຍເຫຼືອກັບໃບບິນຂອງທ່ານໄດ້ທຸກເວລາ ໃນລະຫວ່າງທີ່ທ່ານຢູ່ໂຮງຫມໍ ຫຼື ໃນຂັ້ນຕອນຮຽກເກັບເງິນ.
ພວກເຮົາຈະກໍານົດຈໍານວນເງິນທີ່ທ່ານຕິດໜີ້ໂດຍການທົບທວນລາຍໄດ້, ຊັບສິນ ຫຼືຊັບພະຍາກອນອື່ນໆຂອງທ່ານ.
ຖ້າຫາກວ່າລາຍໄດ້ຕໍ່ປີຂອງທ່ານນ້ອຍກວ່າ ຫຼື ເທົ່າກັບ 200% ຂອງແນວທາງຄວາມທຸກຍາກຂອງລັດຖະບານກາງໃນປັດຈຸບັນ, ທ່ານມີສິດໄດ້ຮັບເງິນຊ່ວຍເຫຼືອ.
ສາມາດເບິ່ງແນວທາງຄວາມທຸກຍາກຂອງລັດຖະບານກາງ ໄດ້ທີ່ http://aspe.hhs.gov/poverty/index.cfm.

ທ່ານອາດຈະມີສິດໄດ້ຮັບການຊ່ວຍເຫຼືອທັງໝົດ ຫຼືບາງສ່ວນຂອງໃບບິນຄ່າໂຮງໝໍຂອງທ່ານ.
ການຊ່ວຍເຫຼືອແມ່ນອີງໃສ່ອັດຕາເລື່ອນ ທີ່ພິຈາລະນາລາຍໄດ້ປະຈໍາປີຂອງທ່ານແລະຂະໜາດຄອບຄົວ

## ຂ້າພະເຈົ້າຈະຂໍຄວາມຊ່ວຍເຫຼືອດ້ານການເງິນໄດ້ແນວໃດ?

ເພື່ອໃຫ້ໄດ້ໃບຄໍາຮ້ອງຂໍຄວາມຊ່ວຍເຫຼືອດ້ານການເງິນຟລີ, ສະຫຼຸບພາສາທີ່ເຂົ້າໃຈໄດ້ງ່າຍ, ຫຼື ນະໂຍບາຍຄວາມຊ່ວຍເຫຼືອດ້ານການເງິນ ໃຫ້ໄປທີ່: [www.texashealth.org/Financial-Assistance](http://www.texashealth.org/Financial-Assistance)
ທ່ານສາມາດຫຍິບສໍາເນົາເອກະສານໄດ້ຟລີ, ຂໍຜ່ານອີເມລໄດ້ຟລີ ຫຼື ຮັບຄວາມຊ່ວຍເຫຼືອພ້ອມໃບຄໍາຮ້ອງຂໍໄດ້ທີ່ໂຮງໝໍ THR hospital, ຫຼື ທີ່ 500 E Border Street Suite 1200, Arlington Texas 76010.

ທ່ານສາມາດຂໍຄວາມຊ່ວຍເຫຼືອພ້ອມນະໂຍບາຍຄວາມຊ່ວຍເຫຼືອດ້ານການເງິນ ຫຼື ໃບຄໍາຮ້ອງຂໍ ດ້ວຍການໂທຫາພະແນກບໍລິການລູກຄ້າ 1.800.890.6034.
ໃນບາງກໍລະນີທ່ານອາດໄດ້ຮັບຊ່ວຍເຫຼືອດ້ານການເງິນຈາກໂຮງໝໍໂດຍບໍ່ຕ້ອງຍື່ນໃບຄໍາຮ້ອງ.

## ວຽກເອກະສານ

ທ່ານມີຄວາມຮັບຜິດຊອບໃນການໃຫ້ຂໍ້ມູນໃຫ້ທັນເວລາ ກ່ຽວກັບຜົນປະໂຫຍດສຸຂະພາບຂອງທ່ານ, ລາຍໄດ້, ສິນຊັບ ແລະ ເອກະສານອື່ນໆ ທີ່ຈະຊ່ວຍໃຫ້ ເຫັນວ່າທ່ານມີຄຸນສົມບັດເໝາະສົມ.
ວຽກເອກະສານອາດແມ່ນໃບແຈ້ງຍອດລາຍການບັນຊີທະນາຄານ, ແບບຟອມອາກອນລາຍໄດ້, ເຊັກ, ຫຼືຂໍ້ມູນອື່ນໆ.

## ການປິ່ນປົວສຸກເສີນ ແລະ ການປິ່ນປົວທີ່ຈໍາເປັນທາງການແພດ

ຖ້າທ່ານມີຄຸນສົມບັດເໝາະສໍາລັບຄວາມຊ່ວຍເຫຼືອກັບໃບບິນຂອງທ່ານ, ທ່ານຈະບໍ່ຖືກຄິດຄ່າທໍານຽມບໍລິການໃນການປິ່ນປົວສຸກເສີນ ຫຼື ການປິ່ນປົວທີ່ຈໍາເປັນທາງການແພດ ຫຼາຍກວ່າຄົນທີ່ມີປະກັນໄພຄຸ້ມຄອງໃນການເບິ່ງແຍງແນວດຽວກັນ.
ເພື່ອກໍານົດຈໍານວນເງິນ ໂດຍທົ່ວໄປແລ້ວ ພວກເຮົາໃຊ້ວິທີການເບິ່ງຍ້ອນ (ພວກເຮົາປຽບທຽບຈໍານວນເງິນທີ່ໄດ້ຮັບຈາກຜູ້ປະກັນໄພແລະບໍລິສັດປະກັນໄພຂອງພວກເຂົາໃນປີກ່ອນ).

## ກິດຈະກໍາການເກັບກໍາ

ໃບບິນທີ່ຍັງບໍ່ຊໍາລະ 120 ວັນ ຫຼັງຈາກວັນທີ່ໃບບິນຄັ້ງທໍາອິດ ອາດຖືກລາຍງານກ່ຽວກັບປະຫວັດເຄດິດຂອງທ່ານ ຫຼື ຜູ້ຄໍ້າປະກັນຂອງທ່ານ. ທ່ານ ຫຼື ຜູ້ຄໍ້າປະກັນສາມາດຍື່ນຂໍຄວາມຊ່ວຍເຫຼືອກັບໃບບິນຂອງທ່ານໄດ້ທຸກເວລາ ໃນຂັ້ນຕອນເກັບກໍາ ໂດຍຕິດຕໍ່ພະແນກບໍລິການລູກຄ້າທີ່ 18800.890.6034. ປົກກະຕິແລ້ວ ພວກເຮົາບໍ່ຟ້ອງຮ້ອງຜູ້ປ່ວຍ, ດໍາເນີນການຄະດີຕໍ່ຊັບສິນສ່ວນບຸກຄົນ, ຫຼື ຄ່າຈ້າງ.

Rev 10/8/15